ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0354 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 21.02.2023

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.

- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້.
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ເຂົ້າຮ່ວມສະໝັກທຶນການສຶກສາ ຂອງປະເທດນິວຊີແລນ **(MNZS)** ສຳລັບສົກປີ **2023.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ໜັງສືແຈ້ງທຶນການສຶກສາ ຈາກຫ້ອງການ, ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 597/ຫກ, ລົງວັນທີ 10 ກຸມພາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດ ແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເຂົ້າຮ່ວມສະໝັກທຶນການສຶກ ພາຍໃຕ້ທຶນລັດຖະບານນິວຊີແລນ, ຈຳນວນ 35 ທຶນ ຊຶ່ງມີ ລະດັບອະນຸປະລິນຍາ 6 ເດືອນ, ອະນຸປະລິນຍາ 1 ປີ, ປະລິນຍາໂທ 1-2 ປີ ແລະ ປະລິນຍາເອກ 3,5 ປີ ສຳລັບສົກປີ 2023.

ສຳລັບຮູບແບບການສະໝັກ ແມ່ນລະບົບອອນລາຍໂດຍຜ່ານທາງເວັບໄຊ www.nzscholarship. govt.nz ກ່ອນວັນທີ **28 ກຸມພາ 2023** ພາຍຫຼັງສະໝັກຜ່ານທາງເວັບໄຊແລ້ວໃຫ້ສະແກນສົ່ງໃຫ້ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ ເພື່ອເປັນຂໍ້ມູນ ແລະ ຕິດຕາມ, ສ່ວນລາຍລະອຽດເພີ່ມເຕີມແມ່ນໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ບຸນທະວີ ໄຊຍະເພັດ